ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ 0154 /ກສ
ນະຄອນຫຼວງວຽງຈັນ, ວັນທີ 16 JUL 2025

# ຂໍ້ຕົກລົງ
## ວ່າດ້ວຍ ຕາໜ່າງປ້ອງກັນພືດ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ມະຕິຕົກລົງ ຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີຂອງກົມປູກຝັງ ສະບັບເລກທີ 4027/ກປຝ, ລົງວັນທີ 05 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ສະບັບເລກທີ 0145/ຫກ, ລົງວັນທີ 10 ກໍລະກົດ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງຕາໜ່າງປ້ອງກັນພືດ ເພື່ອປະຕິບັດໃຫ້ຖືກຕາມຫຼັກວິຊາການ, ທັນກັບສະພາບການ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເຝົ້າລະວັງ ແລະ ສະກັດກັ້ນການແຜ່ລະບາດສັດຕູພືດ, ທົດສອບວິໄຈຄຸນນະພາບປັດໄຈການຜະລິດ ແລະ ສານຕົກຄ້າງ, ຫຼຸດຜ່ອນຜົນເສຍຫາຍຈາກສັດຕູພືດ ແລະ ຜົນກະທົບຕໍ່ສຸຂະພາບ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ປະກອບສ່ວນໃຫ້ແກ່ການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມທິດ ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 2 ຕາໜ່າງປ້ອງກັນພືດ**

ຕາໜ່າງປ້ອງກັນພືດ ແມ່ນ ລະບົບເຄືອຂ່າຍປະສານງານດ້ານວິຊາການປ້ອງກັນພືດ ເພື່ອສຳຫຼວດ, ຕິດຕາມ ແລະ ເຝົ້າລະວັງສັດຕູພືດ, ການວິໄຈສັດຕູພືດ, ການເກັບຮັກສາຕົວຢ່າງ, ການສ້າງຖານຂໍ້ມູນສັດຕູພືດ, ການພະຍາກອນແຜ່ລະບາດຂອງສັດຕູພືດ, ການຄວບຄຸມ ແລະ ນຳໃຊ້ເຕັກນິກການປ້ອງກັນພືດແບບປະສົມປະສານ ລວມທັງການທົດສອບວິໄຈຄຸນນະພາບຝຸ່ນ, ຢາປາບສັດຕູພືດ, ເມັດພັນພືດ ແລະ ການຕົກຄ້າງເຄມີກະສິກຳ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບັນຊີສັດຕູພືດ** ໝາຍເຖິງ ລາຍຊື່ ຂອງສັດຕູພືດ ເຊັ່ນ ບັນຊີລາຍຊື່ພະຍາດພືດ, ແມງໄມ້ສັດຕູພືດ, ຫຍ້າ ຫຼື ວັດຊະພືດ ແລະ ສັດຮາວີພືດ ຫຼື ສັດຕູພືດໃນເລົ້າສາງ ຊຶ່ງເປັນຂໍ້ມູນພື້ນຖານ ໃຫ້ແກ່ການເຈລະຈາເປີດຕະຫຼາດພືດ ແລະ ຜະລິດຕະພັນພືດຂອງ ສປປ ລາວ ກັບປະເທດຄູ່ຄ້າ;

2. **ບົ່ງມະຕິ** ໝາຍເຖິງ ການພິສູດອັນຈຳເພາະຂອງພືດ ໂດຍຜ່ານລັກສະນະອາການ ແລະ ສັນຍາລັກຈຳເພາະຂອງພືດ ແລະ ຜະລິດຕະພັນພືດ ລວມເຖິງປັດໄຈອື່ນ ທີ່ພົວພັນກັບຂະບວນການຂອງພືດທີ່ຜິດປົກກະຕິ ຊຶ່ງເກີດຈາກສັດຕູພືດທຳລາຍ ແລະ ປັດໄຈອື່ນ;

3. **ການພະຍາກອນ** ໝາຍເຖິງ ການຄາດຄະເນ ຫຼື ການປະເມີນສັດຕູພືດລ່ວງໜ້າ ເພື່ອກ່າວເຕືອນການລະບາດຂອງສັດຕູພືດ ທີ່ກ່ຽວຂ້ອງກັບປັດໄຈດິນຟ້າອາກາດ ເຊັ່ນ ອຸນຫະພູມ, ຄວາມຊຸ່ມຊື່ນ, ແສງແດດ, ປະລິມານນ້ຳຝົນ ແລະ ທິດທາງລົມ;

4. **ການເຝົ້າລະວັງ** ໝາຍເຖິງ ການຕິດຕາມ ສະພາບການລະບາດຂອງສັດຕູພືດ ໃນພື້ນທີ່ການຜະລິດ ເພື່ອຄວບຄຸມບໍ່ໃຫ້ມີການລະບາດຮ້າຍແຮງ ແລະ ຫາວິທີທາງແກ້ໄຂໃຫ້ທັນກັບສະພາບການ;

5. **ການຕົກຄ້າງເຄມີກະສິກຳ** ໝາຍເຖິງ ການຕົກຄ້າງຂອງຢາປາບສັດຕູພືດ, ທາດໂລຫະໜັກ, ສານພິດຈາກເຊື້ອຈຸລິນຊີ ແລະ ເຄມີປົນເປື້ອນອື່ນ ໃນພືດ ແລະ ຜະລິດຕະພັນພືດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບຕາໜ່າງປ້ອງກັນພືດ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕາໜ່າງປ້ອງກັນພືດ

**ມາດຕາ 5 ການສ້າງຕາໜ່າງປ້ອງກັນພືດ**

ການສ້າງຕາໜ່າງປ້ອງກັນພືດ ແມ່ນ ການພັດທະນາລະບົບເຄືອຂ່າຍປະສານງານດ້ານວິຊາການປ້ອງກັນພືດ ເພື່ອເຊື່ອມໂຍງກັບບັນດາຫົວໜ່ວຍຈັດຕັ້ງປະຕິບັດ ຊຶ່ງມີທີ່ຕັ້ງປະຈຳຢູ່ ສູນກາງ, ແຂວງ, ເມືອງ, ຕາແສງ ແລະ ບ້ານ ເປົ້າໝາຍ.

ຕາໜ່າງປ້ອງກັນພືດ ປະກອບດ້ວຍ ຈຸດປະສານງານ, ຄລີນິກພືດ, ໜ່ວຍງານບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ໝໍພືດ.

**ມາດຕາ 6 ຈຸດປະສານງານ**

ຈຸດປະສານງານ ແມ່ນ ອົງປະກອບໜຶ່ງຂອງຕາໜ່າງປ້ອງກັນພືດ ຊຶ່ງມີ ພະນັກງານວິຊາການປະຈຳຢູ່ຂັ້ນສູນກາງ, ແຂວງ, ເມືອງ, ຕາແສງ ແລະ ບ້ານເປົ້າໝາຍ ເພື່ອເຮັດໜ້າທີ່ ຂຶ້ນແຜນ, ຕິດຕາມ, ກວດກາ ແລະ ລາຍງານຂັ້ນເທິງຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານ ຂອງ ຄລີນິກພືດ, ໜ່ວຍງານບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ໝໍພືດ.

**ມາດຕາ 7 ຄລີນິກພືດ**

ຄລີນິກພືດ ແມ່ນ ຈຸດບໍລິການ ທົດສອບວິໄຈ ສັດຕູພືດ, ປັດໄຈການຜະລິດ, ສານຕົກຄ້າງ, ແນະນຳການປ້ອງກັນ ແລະ ກຳຈັດສັດຕູພືດ ຊຶ່ງມີທີ່ຕັ້ງຢູ່ ສູນປ້ອງກັນພືດ, ຂະແໜງປູກຝັງຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຕາແສງ ຕາມມາດຕະຖານ ແລະ ເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ໝໍພືດ ຢ່າງໜ້ອຍ ສອງ ຄົນ;

2. ຫ້ອງເຮັດວຽກ ເພື່ອຮັບປະກັນການເຄື່ອນໄຫວບໍລິການຂອງຄລີນິກພືດ;
3. ປ້າຍ ທີ່ບົ່ງບອກເຖິງ ການຈັດຕັ້ງທີ່ຕົນຂຶ້ນກັບ, ສະຖານທີ່ຕັ້ງ ແລະ ເບີໂທສາຍດ່ວນ;
4. ກ້ອງຈຸລະທັດ ຢ່າງໜ້ອຍ ໜຶ່ງ ເຄື່ອງ;
5. ອຸປະກອນດ້ານການວິໄຈສັດຕູພືດ ແລະ ອຸປະກອນທົດສອບປັດໄຈການຜະລິດຂັ້ນພື້ນຖານ;
6. ບັ້ງສີດຢາ ຢ່າງໜ້ອຍ ໜຶ່ງ ຊຸດ;
7. ຊຸດປ້ອງກັນຄວາມປອດໄພຂັ້ນພື້ນຖານ.

**ມາດຕາ 8 ໜ່ວຍບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ**

ໜ່ວຍບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແມ່ນ ຈຸດບໍລິການຝຶກອົບຮົມໝໍພືດປະຈຳບ້ານ, ຈັດຫາຢາປາບສັດຕູພືດ, ຜະລິດຕະພັນຊີວະພາບ, ສ້າງຖານຂໍ້ມູນການລະບາດຂອງສັດຕູພືດ ແລະ ບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ຕາມການແນະນຳຂອງຄລີນິກພືດ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນຢູ່ ສູນປ້ອງກັນພືດ, ຂະແໜງປູກຝັງຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ຕາມມາດຕະຖານ ແລະ ເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ໝໍພືດ ປະຈຳບ້ານ ຢ່າງໜ້ອຍ ສອງ ຄົນ ທີ່ໄດ້ຜ່ານການຝຶກອົບຮົມການນຳໃຊ້ຢາປາບສັດຕູພືດ ແລະ ມີຄວາມຊ່ຽວຊານ ຕາມຫຼັກສູດ ທີ່ກົມປູກຝັງກຳນົດ;
2. ສາງເກັບມ້ຽນວັດຖຸເຄມີປ້ອງກັນພືດ;
3. ຢາປາບສັດຕູພືດ, ບັ້ງສີດຢາ ແລະ ຊຸດປ້ອງກັນຄວາມປອດໄພ ຕາມເຕັກນິກວິຊາການ.

**ມາດຕາ 9 ໝໍພືດ**

ໝໍພືດ ແມ່ນ ບຸກຄົນ ທີ່ໄດ້ຮັບການຢັ້ງຢືນທາງດ້ານວິຊາການປ້ອງກັນພືດ ຈາກສູນປ້ອງກັນພືດ, ຂະແໜງປູກຝັງຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ປະຈຳຢູ່ຄລີນິກພືດ, ໜ່ວຍງານບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ບ້ານເປົ້າໝາຍ ເພື່ອເຮັດໜ້າທີ່ ເຝົ້າລະວັງ, ລາຍງານສະ ພາບການລະບາດ, ວິໄຈສັດຕູພືດທົ່ວໄປທີ່ສຳຄັນ, ທົດສອບປັດໄຈການຜະລິດ ແລະ ແນະນຳການປ້ອງກັນ ແລະ ກຳຈັດສັດຕູພືດ, ຈັດຫາຢາປາບສັດຕູພືດ ແລະ ຜະລິດຕະພັນຊີວະພາບ ໃຫ້ແກ່ຊາວກະສິກອນ.

ໝໍພືດປະຈຳບ້ານ ໄດ້ມາຈາກການເລືອກເອົາຕົວແທນຂອງຊາວກະສິກອນ ຫຼື ຜູ້ປະກອບການ ທີ່ມີຄວາມສະໝັກໃຈ ບ້ານລະ ໜຶ່ງ ຫາ ສາມ ທ່ານ ມາຝຶກອົບຮົມ ກ່ຽວກັບ ເຕັກນິກການປ້ອງກັນພືດ ຕາມຫຼັກສູດທີ່ກົມປູກຝັງກຳນົດ ເພື່ອໃຫ້ການເປັນຜູ້ຊຳນານງານດ້ານການປ້ອງກັນ ແລະ ກຳຈັດສັດຕູພືດ ແລະສາມາດນຳພາຊາວກະສິກອນປະຕິບັດຕົວຈິງ.

## ໝວດທີ 3
## ກິດຈະການຕາໜ່າງປ້ອງກັນພືດ

**ມາດຕາ 10 ກິດຈະການຕາໜ່າງປ້ອງກັນພືດ**

ກິດຈະການຕາໜ່າງປ້ອງກັນພືດ ແມ່ນ ບັນດາວຽກງານ ຫຼື ຄວາມຮັບຜິດຊອບຂອງຕາໜ່າງປ້ອງກັນພືດ ທີ່ເຄື່ອນໄຫວເປັນປະຈຳ ຊຶ່ງປະກອບດ້ວຍ:

1. ການສຳຫຼວດສັດຕູພືດ;
2. ການວິໄຈສັດຕູພືດ;
3. ການເກັບຮັກສາຕົວຢ່າງ ແລະ ສ້າງຖານຂໍ້ມູນສັດຕູພືດ;
4. ການພະຍາກອນ ແລະ ເຝົ້າລະວັງສັດຕູພືດ;
5. ການທົດສອບ ແລະ ວິໄຈ ປັດໄຈການຜະລິດ;
6. ການຄວບຄຸມ, ປ້ອງກັນ ແລະ ກຳຈັດ ສັດຕູພືດ ແລະ ການຕອບໂຕ້ສຸກເສີນ;



ℎ

7. ການສ້າງຄວາມເຂັ້ມແຂງ ໃຫ້ແກ່ວິຊາການປ້ອງກັນພືດ;

8. ການລາຍງານການລະບາດຂອງສັດຕູພືດ

**ມາດຕາ 11 ການສຳຫຼວດສັດຕູພືດ**

ການສຳຫຼວດສັດຕູພືດ ແມ່ນ ຂະບວນການປະຕິບັດໃນພາກສະໜາມ ເພື່ອຕິດຕາມ, ເຝົ້າລະວັງສັດຕູພືດ ຕາມເຕັກນິກວິຊາການ ດ້ວຍການນຳໃຊ້ຂໍ້ມູນສັດຕູພືດ ໃນການພະຍາກອນ ຫຼື ຄາດຄະເນ ການແຜ່ລະບາດ ແລະ ແຈ້ງເຕືອນໃຫ້ແກ່ຊາວກະສິກອນ ເພື່ອກຽມພ້ອມຮັບມື ແລະ ເລືອກວິທີການທີ່ເໝາະສົມ ໃນການປ້ອງກັນ ແລະ ກຳຈັດ ສັດຕູພືດ.

**ມາດຕາ 12 ການວິໄຈສັດຕູພືດ**

ການວິໄຈສັດຕູພືດ ແມ່ນ ການຈຳແນກສັດຕູພືດ ແລະ ການວິນິໄສສັດຕູພືດຂັ້ນພື້ນຖານ ດ້ວຍການສັງເກດລັກສະນະອາການຂອງພືດ ແລະ ສັດຕູພືດ ເພື່ອໃຫ້ຮູ້ສາເຫດການທຳລາຍ ແລະ ນຳໃຊ້ຂໍ້ມູນດັ່ງກ່າວ ເຂົ້າໃນການສ້າງຖານຂໍ້ມູນ ບັນຊີສັດຕູພືດ, ການແຜ່ລະບາດ ແລະ ຫາວິທີການປ້ອງກັນ ແລະ ກຳຈັດທີ່ເໝາະສົມ.

**ມາດຕາ 13 ການເກັບຮັກສາຕົວຢ່າງ ແລະ ສ້າງຖານຂໍ້ມູນສັດຕູພືດ**

ການເກັບຮັກສາຕົວຢ່າງ ແມ່ນ ການເກັບຫຼັກຖານ, ມີຂໍ້ມູນລະອຽດຂອງສັດຕູພືດ ເພື່ອໃຊ້ເປັນບ່ອນອີງດ້ານວິທະຍາສາດ ວ່າພົບໃນພື້ນທີ່ລົງສຳຫຼວດສັດຕູພືດຊະນິດໃດໜຶ່ງ ແລະ ການແຜ່ລະບາດຂອງສັດຕູພືດຊະນິດນັ້ນໆ.

ການສ້າງຖານຂໍ້ມູນສັດຕູພືດ ແມ່ນ ການເອົາຜົນການວິໄຈຊະນິດສັດຕູພືດ ແລະ ລາຍລະອຽດຂອງການສຳຫຼວດ ຈົດເຂົ້າບັນທຶກໄວ້ໃນໂປຼແກມຄອມພິວເຕີ ຊຶ່ງເປັນຂໍ້ມູນພື້ນຖານສຳລັບນຳໃຊ້ເຂົ້າໃນການພະຍາກອນ ແລະ ຄາດຄະເນການລະບາດສັດຕູພືດ ເພື່ອເປັນຂໍ້ມູນສຳຄັນໃນການແຈ້ງເຕືອນກ່ອນເກີດການລະບາດ.

**ມາດຕາ 14 ການພະຍາກອນ ແລະ ເຝົ້າລະວັງສັດຕູພືດ**

ການພະຍາກອນສັດຕູພືດ ແມ່ນ ການຄາດຄະເນ ຫຼື ການປະເມີນການລະບາດຂອງສັດຕູພືດລ່ວງໜ້າ ເພື່ອແຈ້ງເຕືອນກ່ຽວກັບປັດໄຈດິນຟ້າອາກາດ ເຊັ່ນ ອຸນຫະພູມ, ຄວາມຊຸ່ມຊື່ນ, ແສງແດດ, ປະລິມານນ້ຳຝົນ ແລະ ທິດທາງລົມ.

ການເຝົ້າລະວັງສັດຕູພືດ ແມ່ນ ການຕິດຕາມປະກົດການເກີດຂຶ້ນຂອງສັດຕູພືດເບື້ອງຕົ້ນ ໃນພື້ນທີ່ການຜະລິດ ເພື່ອຄວບຄຸມບໍ່ໃຫ້ມີການລະບາດຮ້າຍແຮງ, ຊອກຫາວິທີການປ້ອງກັນ ແລະ ກຳຈັດ ໃຫ້ທັນກັບສະພາບການ.

**ມາດຕາ 15 ການແຈ້ງເຕືອນການລະບາດຂອງສັດຕູພືດ**

ການແຈ້ງເຕືອນການລະບາດຂອງສັດຕູພືດ ແມ່ນ ການອອກຂ່າວ, ແຈ້ງການ ຂອງສະພາບການແຜ່ລະບາດສັດຕູພືດ ປະຈຳລະດູການ ແລະ ກຳນົດຂໍ້ແນະນຳ ກ່ຽວກັບ ການປ້ອງກັນ ແລະ ກຳຈັດສັດຕູພືດ ດ້ວຍການນຳໃຊ້ເຕັກນິກການປ້ອງກັນ ແລະ ຄວບຄຸມສັດຕູພືດ ໃນແຕ່ລະຊ່ວງລະດູການຜະລິດ ຂອງແຕ່ລະເຂດ ໂດຍໃຫ້ຄຳແນະນຳຜ່ານ ຄູ່ມື, ແຜ່ນພັບ, ໂປສເຕີ ແລະ ສື່ຂ່າວທ້ອງຖິ່ນ.

**ມາດຕາ 16 ການທົດສອບ ແລະ ວິໄຈປັດໄຈການຜະລິດ**

ການທົດສອບປັດໄຈການຜະລິດ ແມ່ນ ການທົດສອບຄຸນນະພາບ ແລະ ມາດຕະຖານຂອງປັດໄຈການຜະລິດ ລວມທັງສານຕົກຄ້າງເຄມີກະສິກຳຂັ້ນພື້ນຖານທີ່ອ່ານຜົນໄວ ຊຶ່ງນຳໃຊ້ເຂົ້າໃນການຜະລິດກະສິກຳ ເຊັ່ນ ຝຸ່ນ, ຢາປາບສັດຕູພືດ, ແນວພັນພືດ ເພື່ອໃຫ້ໝັ້ນໃຈວ່າປັດໄຈການຜະລິດເຫຼົ່ານັ້ນ ມີຄວາມປອດໄພ, ປັດສະຈາກສານຕົກຄ້າງ ທີ່ເປັນອັນຕະລາຍ ແລະ ມີປະສິດທິພາບໃນການຊ່ວຍໃຫ້ພືດຈະເລີນເຕີບໂຕໄດ້ດີ.

ການວິໄຈປັດໄຈການຜະລິດ ແມ່ນ ການວິເຄາະທາງດ້ານປະລິມານ ດ້ວຍການນຳໃຊ້ເຄື່ອງມືທີ່ທັນສະໄໝຕາມມາດຕະຖານສາກົນ ISO/IEC 17025 ຫຼື ມາດຕະຖານປະຕິບັດທີ່ດີຂອງຫ້ອງວິໄຈ ພາກພື້ນ ແລະ ສາກົນ.

**ມາດຕາ 17 ການຄວບຄຸມ, ປ້ອງກັນ ແລະ ກຳຈັດ ສັດຕູພືດ ແລະ ການຕອບໂຕ້ສຸກເສີນ**

ການຄວບຄຸມ, ປ້ອງກັນ ແລະ ກຳຈັດ ສັດຕູພືດ ແມ່ນ ການນຳໃຊ້ວິທີການປ້ອງກັນພືດແບບປະສົມປະສານ ແລະ ຖ່າຍທອດເຕັກນິກວິຊາການປ້ອງກັນພືດ ໃຫ້ແກ່ວິຊາການຂັ້ນ ແຂວງ, ເມືອງ, ຕາແສງ, ຊາວກະສິກອນ ແລະ ຜູ້ປະກອບການ ໂດຍຜ່ານການຝຶກອົບຮົມ ກ່ຽວກັບວຽກງານປ້ອງກັນ ແລະ ກຳຈັດສັດຕູພືດ.

ການຕອບໂຕ້ສຸກເສີນ ແມ່ນ ການຈັດການສັດຕູພືດ ທີ່ນຳໃຊ້ເຕັກນິກຕ່າງໆ ເພື່ອໃຫ້ທັນກັບສະພາບການລະບາດ ເຊັ່ນ ການນຳໃຊ້ເຊື້ອຊີວະວິທະຍາ, ສະໝຸນໄພ, ນຳໃຊ້ຢາປາບສັດຕູພືດທີ່ຖືກວິທີ, ເຕັກນິກການປ້ອງກັນ ແລະ ກຳຈັດ ທີ່ຖືກຕ້ອງ ແລະ ມີປະສິດທິພາບ.

ຕາໜ່າງປ້ອງກັນພືດ ຕ້ອງຂຶ້ນແຜນກະກຽມລ່ວງໜ້າ ໃນແຕ່ລະດູການຜະລິດ ກ່ຽວກັບ ຄວາມຕ້ອງການທາງດ້ານບຸກຄະລາກອນ, ພາຫະນະ, ວັດຖຸປະກອນ, ຢາປາບສັດຕູພືດ ແລະ ປັດໄຈຮັບໃຊ້ອື່ນ ທີ່ນຳໃຊ້ເຂົ້າໃນການ ຄວບຄຸມ, ປ້ອງກັນ ແລະ ກຳຈັດ ການລະບາດສັດຕູພືດ ທີ່ອາດເກີດຂຶ້ນໃນທ້ອງຖິ່ນຂອງຕົນໃຫ້ທັນສະພາບການ.

**ມາດຕາ 18 ການສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາການປ້ອງກັນພືດ**

ການສ້າງຄວາມເຂັ້ມແຂງ ໃຫ້ແກ່ວິຊາການປ້ອງກັນພືດ ແມ່ນ ການສ້າງຫຼັກສູດຝຶກອົບຮົມ, ຖ່າຍທອດເຕັກນິກວິຊາການປ້ອງກັນພືດ ໃຫ້ແກ່ວິຊາການຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ, ຊາວກະສິກອນ, ຜູ້ປະກອບການ, ນິຕິບຸກຄົນ ແລະ ບຸກຄົນທົ່ວໄປ ສຳລັບຜູ້ທີ່ໃຫ້ຄວາມສົນໃຈ ຜ່ານການຈັດຝຶກອົບຮົມ ແລະ ເຂົ້າຮ່ວມປະຊຸມ, ສຳມະນາ ຢູ່ ພາຍໃນ, ພາກພື້ນ ແລະ ສາກົນ.

**ມາດຕາ 19 ການລາຍງານການລະບາດຂອງສັດຕູພືດ**

ເຈົ້າຂອງພື້ນທີ່ການປູກພືດ ຫຼື ບຸກຄົນໃດໜຶ່ງ ທີ່ພົບເຫັນການທຳລາຍພືດ ຫຼື ການແຜ່ລະບາດ ຂອງສັດຕູພືດ ຕ້ອງລາຍງານຕໍ່ອົງການປົກຄອງ ຕາມສາຍວິຊາການຂອງຕົນ ແລະ ລາຍງານຫາສູນປ້ອງກັນພືດ, ກົມປູກຝັງ ພາຍໃນ ສິບສອງ ຫາ ຊາວສີ່ຊົ່ວໂມງ ພ້ອມທັງກະກຽມຄວາມພ້ອມໃນການປ້ອງກັນ ແລະ ກຳຈັດສັດຕູພືດສຸກເສີນ.

ຕາໜ່າງປ້ອງກັນພືດແຕ່ລະຂັ້ນ ຕ້ອງສ້າງຖານຂໍ້ມູນ ແຫຼ່ງສະໜອງວັດຖຸປະກອນ, ເຕັກນິກ, ຢາປາບສັດຕູພືດ ແລະ ປັດໄຈຮັບໃຊ້ອື່ນ ເພື່ອສ້າງແຜນຄວາມຕ້ອງການ ແລະ ນຳໃຊ້ເຂົ້າໃນການຄວບຄຸມສັດຕູພືດ ໃຫ້ທັນສະພາບການ.

ຄລີນິກພືດ, ໜ່ວຍງານບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ໝໍພືດ ຕ້ອງລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ, ສັງລວມຂໍ້ມູນສັດຕູພືດ, ສະພາບການລະບາດ ແລະ ການເສຍຫາຍຂອງພືດ ໃຫ້ການຈັດຕັ້ງຂັ້ນເທິງຖັດຕົນ ຮັບຊາບຢ່າງເປັນປົກກະຕິ ປະຈຳເດືອນ, ສາມ ເດືອນ, ຫົກ ເດືອນ ແລະ ປະຈຳປີ.

## ໝວດທີ 4
## ການແບ່ງຄວາມຮັບຜິດຊອບກ່ຽວກັບຕາໜ່າງປ້ອງກັນພືດ

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກົມປູກຝັງ**

ໃນວຽກງານຕາໜ່າງປ້ອງກັນພືດ ກົມປູກຝັງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄົ້ນຄວ້າ ແລະ ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ໃຫ້ເປັນແຜນງານ, ໂຄງການລະອຽດ ເພື່ອຄຸ້ມຄອງວຽກງານຕາໜ່າງປ້ອງກັນພືດ ໃນຂອບເຂດທົ່ວປະເທດ;

2. ໂຄສະນາເຜີຍແຜ່ ແນວທາງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ລົງຮອດທ້ອງຖິ່ນ;

3. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດຂອງຂະແໜງປູກຝັງຂັ້ນແຂວງ ຕາມສາຍວິຊາສະເພາະ ໃນຂອບເຂດທົ່ວປະເທດ;

4. ຜັນຂະຫຍາຍຍຸດທະສາດ, ສ້າງແຜນ ເພື່ອບຳລຸງ ຍົກລະດັບ ແລະ ແຕ່ງຕັ້ງພະນັກງານຕາໜ່າງປ້ອງກັນພືດ ໂດຍມີການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ;

5. ປຸກລະດົມຂົນຂວາຍ, ຍາດແຍ່ງ, ຄຸ້ມຄອງ, ນຳໃຊ້ທຶນຮອນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານຕາໜ່າງປ້ອງກັນພືດ;

6. ປະສານສົມທົບກັບພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງວຽກງານປ້ອງກັນພືດ ໃນແຕ່ລະໄລຍະ;

7. ພົວພັນຮ່ວມມື ກັບຕ່າງປະເທດ ເພື່ອພັດທະນາຕາໜ່າງປ້ອງກັນພືດ ໃຫ້ຂະຫຍາຍອອກໄປຢ່າງກວ້າງຂວາງ;

8. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດ ເຊັ່ນ ການລະບາດຂອງສັດຕູພືດ, ການປ້ອງກັນ ແລະ ກຳຈັດ ການລະບາດຂອງສັດຕູພືດ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຢ່າງເປັນປົກກະຕິ;

9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງສູນປ້ອງກັນພືດ**

ໃນວຽກງານຕາໜ່າງປ້ອງກັນພືດ ສູນປ້ອງກັນພືດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ, ດຳລັດ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ, ດຳລັດ ວ່າດ້ວຍແນວພັນພືດ ລົງຮອດທ້ອງຖິ່ນ;

2. ໂຄສະນາ ເຜີຍແຜ່ ແລະ ຜັນຂະຫຍາຍ ວຽກງານຕາໜ່າງປ້ອງກັນພືດ ລົງສູ່ແຂວງ, ເມືອງ, ຕາແສງ ແລະ ບ້ານເປົ້າໝາຍ ໃນຂອບເຂດທົ່ວປະເທດ;

3. ຝຶກອົບຮົມ ກ່ຽວກັບ ການສຳຫຼວດ, ການວິໄຈສັດຕູພືດຂັ້ນພື້ນຖານ, ການເກັບຮັກສາຕົວຢ່າງ, ທົດສອບ ແລະ ວິໄຈປັດໄຈການຜະລິດ ພ້ອມທັງນຳເອົາຕົວຢ່າງມາຫ້ອງວິໄຈ ຂອງສູນປ້ອງກັນພືດ;

4. ທົດສອບ ແລະ ວິໄຈ ປັດໄຈການຜະລິດ, ສັດຕູພືດ ແລະ ຜະລິດຕະພັນພືດ ກ່ອນ ແລະ ຫຼັງການເກັບກ່ຽວ;

5. ສ້າງ, ປັບປຸງຖານຂໍ້ມູນ, ເກັບຮັກສາຕົວຢ່າງສັດຕູພືດ ເພື່ອສະໜອງຂໍ້ມູນສັດຕູພືດ ຂອງ ສປປ ລາວ ໃຫ້ແກ່ການພັດທະນາລະບົບການຄວບຄຸມສັດຕູພືດ ແນໃສ່ຍົກສູງທັງປະລິມານ ແລະ ຄຸນນະພາບ ຂອງການຜະລິດພືດ;

6. ປະສານສົບທົບກັບພາກສ່ວນກ່ຽວຂ້ອງຂັ້ນ ແຂວງ, ເມືອງ, ຕາແສງ ແລະ ບ້ານເປົ້າໝາຍ ໃນການສຳຫຼວດ, ຕິດຕາມ ເພື່ອເຝົ້າລະວັງສະພາບການລະບາດຂອງສັດຕູພືດ ພ້ອມທັງອອກແຈ້ງການ ແລະ ແນະນຳດ້ານເຕັກນິກວິຊາການ ໃນການປ້ອງກັນ ແລະ ກຳຈັດສັດຕູພືດ ແຕ່ລະໄລຍະຂອງລະດູການຜະລິດ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດ ໃຫ້ກົມປູກຝັງ ໄດ້ຮັບຊາບຢ່າງເປັນປົກກະຕິ;

8. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຂະແໜງປູກຝັງຂັ້ນແຂວງ**

ໃນວຽກງານຕາໜ່າງປ້ອງກັນພືດ ຂະແໜງປູກຝັງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ແລະ ຜັນຂະຫຍາຍ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ, ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ, ຂໍ້ຕົກລົງ ວ່າດ້ວຍຕາໜ່າງປ້ອງກັນພືດ ແລະ ນິຕິກຳກ່ຽວຂ້ອງ ໃຫ້ເປັນ

ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ສ້າງ ແລະ ຈັດຕັ້ງປະຕິບັດວຽກງານ ຄລີນິກພືດ ແລະ ໜ່ວຍງານ ບໍລິການປ້ອງກັນ ແລະ ກໍາຈັດສັດຕູພືດ ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 7 ແລະ 8 ຂອງຂໍ້ຕົກລົງສະບັບນີ້;

3. ຊີ້ນໍາ, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານຕາໜ່າງປ້ອງກັນພືດ ຂອງໜ່ວຍງານປູກຝັງຂັ້ນເມືອງ;

4. ປະສານສົມທົບກັບ ໜ່ວຍງານປູກຝັງຂັ້ນເມືອງ ແລະ ສູນປ້ອງກັນພືດ ເພື່ອດໍາເນີນການ ສໍາຫຼວດ, ຕິດຕາມ, ວິນິໄສສັດຕູພືດຂັ້ນພື້ນຖານ ພ້ອມທັງແຍກ ແລະ ນໍາສົ່ງຕົວຢ່າງໄປວິໄຈທີ່ຫ້ອງວິໄຈສັດຕູພືດ ຂອງສູນປ້ອງກັນພືດ;

5. ສ້າງຕາຕະລາງ, ສັງລວມລາຍຊື່ບັນຊີສັດຕູພືດຂັ້ນແຂວງ ໃນແຕ່ລະພືດທີ່ໄດ້ສໍາຫຼວດ, ເກັບຕົວຢ່າງ, ວິນິໄສ ແລະ ເກັບຮັກສາຕົວຢ່າງ ພ້ອມທັງລາຍງານໃຫ້ ສູນປ້ອງກັນພືດ, ກົມປູກຝັງ ຢ່າງເປັນປົກກະຕິ;

6. ປຸກລະດົມຂົນຂວາຍ, ຍາດແຍ່ງ, ຄຸ້ມຄອງ, ນໍາໃຊ້ທຶນຮອນພາຍໃນ ແລະ ຕ່າງປະເທດ ເພື່ອ ພັດທະນາວຽກງານຕາໜ່າງປ້ອງກັນພືດ;

7. ເປັນເຈົ້າການ ສະກັດກັ້ນ ແລະ ຄວບຄຸມ ການເຄື່ອນຍ້າຍທ່ອນພັນ ຈາກເຂດທີ່ມີການລະບາດຂອງສັດຕູພືດ;

8. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດ ໃຫ້ພະແນກກະສິກໍາ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ສູນປ້ອງກັນພືດ ຢ່າງເປັນປົກກະຕິ;

9. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງໜ່ວຍງານປູກຝັງຂັ້ນເມືອງ**

ໃນວຽກງານຕາໜ່າງປ້ອງກັນພືດ ໜ່ວຍງານປູກຝັງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນຂັ້ນເມືອງ, ໜ່ວຍງານເສດຖະກິດ-ການເງິນຕາແສງ, ບ້ານເປົ້າໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດ ວຽກງານຕາໜ່າງປ້ອງກັນພືດ;

2. ສໍາຫຼວດ, ເກັບຕົວຢ່າງສັດຕູພືດ, ວິໄຈ, ເກັບຮັກສາຕົວຢ່າງ, ສ້າງຖານຂໍ້ມູນສັດຕູພືດ ພ້ອມທັງນໍາສົ່ງຕົວຢ່າງ ໄປວິໄຈຢູ່ຫ້ອງວິໄຈຂັ້ນແຂວງ ແລະ ສູນປ້ອງກັນພືດ;

3. ຕິດຕາມ, ເຝົ້າລະວັງ ແລະ ສັງລວມຂໍ້ມູນການລະບາດຂອງສັດຕູພືດ ແລ້ວນໍາສົ່ງໃຫ້ຂະແໜງປູກຝັງຂັ້ນແຂວງ ເພື່ອສ້າງຖານຂໍ້ມູນຂອງແຂວງ;

4. ຕິດຕາມ, ຊຸກຍູ້, ນໍາພາ ການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດ ຂອງໜ່ວຍງານເສດຖະກິດ-ການເງິນຕາແສງ;

5. ເປັນເຈົ້າການ ສະກັດກັ້ນ ແລະ ຄວບຄຸມ ການເຄື່ອນຍ້າຍທ່ອນພັນ ຈາກເຂດທີ່ມີການລະບາດຂອງສັດຕູພືດ;

6. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານຕາໜ່າງປ້ອງກັນພືດ ໃຫ້ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຂະແໜງປູກຝັງຂັ້ນແຂວງ ຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ;

7. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງໜ່ວຍງານເສດຖະກິດ-ການເງິນຕາແສງ**

ໃນວຽກງານຕາໜ່າງປ້ອງກັນພືດ ໜ່ວຍງານເສດຖະກິດ-ການເງິນຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ຂໍ້ຕົກລົງ ວ່າດ້ວຍ ຕາໜ່າງປ້ອງກັນພືດ ຢ່າງເຂັ້ມງວດ;

2. ສໍາຫຼວດ, ເກັບຕົວຢ່າງສັດຕູພືດ, ວິໄຈ, ເກັບຮັກສາຕົວຢ່າງ ແລະ ນໍາສົ່ງຕົວຢ່າງ ໃຫ້ໜ່ວຍງານປູກຝັງຂັ້ນເມືອງ ເພື່ອວິໄຈສັດຕູພືດເບື້ອງຕົ້ນ;

3. ຕິດຕາມ, ເຝົ້າລະວັງ, ສັງເກດການ ແລະ ສັງລວມຂໍ້ມູນການລະບາດຂອງສັດຕູພືດ ພ້ອມທັງນຳສົ່ງຂໍ້ມູນໃຫ້ກັບຂັ້ນເທິງ ຕາມສາຍວິຊາສະເພາະ;

4. ປະສານສົມທົບກັບໜ່ວຍງານປູກຝັງຂັ້ນເມືອງ ແລະ ແລກປ່ຽນບົດຮຽນກັບບ້ານເປົ້າໝາຍ ກ່ຽວກັບການວຽກງານຕາໜ່າງປ້ອງກັນພືດ;

5. ເປັນເຈົ້າການ ສະກັດກັ້ນ ແລະ ຄວບຄຸມ ການເຄື່ອນຍ້າຍທ່ອນພັນ ຈາກເຂດທີ່ມີການລະບາດຂອງສັດຕູພືດ;

6. ສະຫຼຸບ ແລະ ລາຍງານ ສະພາບການແຜ່ລະບາດຂອງສັດຕູພືດ ໃຫ້ຄະນະກຳມະການປົກຄອງຕາແສງ ແລະ ໜ່ວຍງານປູກຝັງຂັ້ນເມືອງ ຢ່າງເປັນປົກກະຕິ;

7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງດ່ານກັກກັນພືດ**

ໃນວຽກງານຕາໜ່າງປ້ອງກັນພືດ ດ່ານກັກກັນພືດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາ, ເກັບຕົວຢ່າງ ປັດໄຈການຜະລິດ, ພືດ ແລະ ນຳສົ່ງຫາ ຄລີນິກພືດ ເພື່ອທົດສອບວິໄຈຄຸນນະພາບ, ສານຕົກຄ້າງ ແລະ ວິໄຈສັດຕູພືດ;

2. ຊ່ວຍປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບດ່ານສາກົນທີ່ມີສາຍແດນຕິດຈອດກັນ ເພື່ອແຈ້ງ ແລະ ໄກ່ເກ່ຍ ບັນຫາກ່ຽວກັບຄຸນນະພາບປັດໄຈການຜະລິດ, ການຕົກຄ້າງຂອງສານເຄມີ ໃນພືດ ແລະ ຜະລິດຕະພັນພືດ;

3. ສະກັດກັ້ນ ການນຳເຂົ້າ, ສົ່ງອອກ ປັດໄຈການຜະລິດທີ່ບໍ່ຖືກຕ້ອງ ເຊັ່ນ ການຕິດສະຫຼາກຢາປາບສັດຕູພືດບໍ່ຖືກຕ້ອງ ແລະ ການນຳເຂົ້າແນວພັນພືດທີ່ຕັດແຕ່ງພັນທຸກຳ;

4. ເຂົ້າຮ່ວມ ໃນການເຝົ້າລະວັງ, ປ້ອງກັນ, ກຳຈັດ ແລະ ຄວບຄຸມ ການລະບາດສັດຕູພືດທ້ອງຖິ່ນ, ສັດຕູພືດຂ້າມແດນ ຕາມການມອບໝາຍຂອງຂັ້ນເທິງຕົນ;

5. ອຳນວຍຄວາມສະດວກ ໃນການນຳເຂົ້າ ອຸປະກອນ, ເຄມີກະສິກຳ ໃນການຄວບຄຸມການລະບາດສັດຕູພືດ ແລະ ຮັບໃຊ້ວຽກງານ ຂອງຕາໜ່າງປ້ອງກັນພືດ;

6. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ**

ໃນວຽກງານຕາໜ່າງປ້ອງກັນພືດ ຜູ້ດຳເນີນທຸລະກິດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ໃນການເຝົ້າລະວັງ ແລະ ການລາຍງານ ສະພາບການລະບາດຂອງສັດຕູພືດ;

2. ເຂົ້າຮ່ວມ ໃນການສະໜອງຢາປາບສັດຕູພືດ ແລະ ວັດຖຸປະກອນທີ່ກ່ຽວຂ້ອງ ເພື່ອຄວບຄຸມການລະບາດສັດຕູພືດ;

3. ໃຫ້ບໍລິການ ດ້ານຄລີນິກພືດ, ໜ່ວຍງານບໍລິການປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ໝໍພືດ ຕາມຫຼັກສູດຝຶກອົບຮົມ ທີ່ ກົມປູກຝັງກຳນົດ ແລະ ການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;

4. ສະໜັບສະໜູນດ້ານທຶນຮອນ, ເຫື່ອແຮງ, ສະຕິປັນຍາ ເຂົ້າໃນວຽກງານຕາໜ່າງປ້ອງກັນພືດ;

5. ສ້າງຕັ້ງ ສະມາຄົມປ້ອງກັນພືດ ເພື່ອເຮັດໜ້າທີ່ ແລກປ່ຽນຄວາມຮູ້, ຕິດຕາມ, ກວດກາ ແລະ ຝຶກອົບຮົມວຽກງານວິຊາການປ້ອງກັນພືດ;

6. ໃຫ້ຄວາມຮ່ວມມືແກ່ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານຕາໜ່າງປ້ອງກັນພືດ ໃນການຕິດຕາມ ກວດກາ ການດຳເນີນທຸລະກິດກ່ຽວກັບການປູກຝັງ;

7. ປະຕິບັດພັນທະ ພາສີ, ອາກອນ ແລະ ພັນທະອື່ນ ກ່ຽວກັບ ຕາໜ່າງປ້ອງກັນພືດ;

8. ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ງົບປະມານ, ເຄື່ອງແບບ ແລະ ບັດວິຊາການ

**ມາດຕາ 27 ງົບປະມານ**

ງົບປະມານຮັບໃຊ້ການເຄື່ອນໄຫວວຽກງານຕາໜ່າງປ້ອງກັນພືດ ໄດ້ຈາກໂຄງການລົງທຶນຂອງລັດ, ໂຄງການໄພພິບັດ, ການຊ່ວຍເຫຼືອທັງພາຍໃນ ແລະ ຕ່າງປະເທດ, ການເກັບລາຍຮັບທາງດ້ານວິຊາການຈາກວຽກງານປ້ອງກັນພືດ, ກັກກັນພືດ, ການທົດສອບ ແລະ ວິໄຈຄຸນນະພາບປັດໄຈການຜະລິດ ແລະ ສານພິດຕົກຄ້າງຢາປາບສັດຕູພືດ ແລະ ງົບປະມານອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ຕາໜ່າງປ້ອງກັນພືດແຕ່ລະຂັ້ນ ເປັນຜູ້ສ້າງໂຄງການ, ກິດຈະການເຄື່ອນໄຫວ, ແຜນຄວາມຕ້ອງການ ງົບປະມານ, ວັດຖຸປະກອນ, ຢາປາບສັດຕູພືດ ນຳສະເໜີຂັ້ນເທິງຂອງຕົນເປັນແຕ່ລະໄລຍະ ເພື່ອກຽມພ້ອມທາງດ້ານງົບປະມານ ໃຫ້ແກ່ການເຄື່ອນໄຫວວຽກງານຕາໜ່າງປ້ອງກັນພືດ ໃຫ້ທັນກັບສະພາບການ ແນໃສ່ປ້ອງກັນການລະບາດຂອງສັດຕູພືດ ທີ່ຈະເກີດຂຶ້ນປະຈຳລະດູການ.

**ມາດຕາ 28 ເຄື່ອງແບບ, ກາໝາຍ ແລະ ບັດວິຊາການ**

ພະນັກງານຕາໜ່າງປ້ອງກັນພືດ ມີເຄື່ອງແບບ ແລະ ກາໝາຍສະເພາະຂອງຕົນ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕາໜ່າງປ້ອງກັນພືດ ໂດຍນຳໃຊ້ເຄື່ອງແບບ ແລະ ກາໝາຍຂອງສູນປ້ອງກັນພືດ.

ບັດວິຊາການ ແມ່ນເອກະສານຢັ້ງຢືນການເຄື່ອນໄຫວຂອງໝໍພືດ ທີ່ຜ່ານການຝຶກອົບຮົມຕາມຫຼັກສູດຂອງກົມປູກຝັງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປູກຝັງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ສິງຫາ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ລິນຄຳ ດວງສະຫວັນ